ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ກະຊວງອຸດສາຫະກຳ ແລະ ການຄ້າ** ເລກທີ 1206/ອຄ.ກຂອ
ນະຄອນຫຼວງວຽງຈັນ, ວັນທີ 25 DEC 2020

# ຂໍ້ຕົກລົງ
# ວ່າດ້ວຍ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ

- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ດຳລັດວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມ ໜັງສືສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ ສະບັບເລກທີ 3523/ກຂອ.ຄຄ, ລົງວັນທີ 18 ພະຈິກ 2020.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບ ການຄຸ້ມຄອງການຈັດຕັ້ງປະຕິບັດວຽກງານຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ເພື່ອອຳນວຍຄວາມສະດວກໃຫ້ຜູ້ສົ່ງອອກສິນຄ້າ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ ແລະ ອາຊຽນ.

**ມາດຕາ 2 ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ**

ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ແມ່ນການດຳເນີນຂັ້ນຕອນຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງຂອງຜູ້ສົ່ງອອກສິນຄ້າ ໂດຍນຳໃຊ້ໃບແຈ້ງລາຍລະອຽດແຫຼ່ງກຳເນີດສິນຄ້າ ໃນການສົ່ງອອກແຕ່ລະຄັ້ງຕາມລະບຽບແຫຼ່ງກຳເນີດສິນຄ້າ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ.

**ມາດຕາ 3 ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ສົ່ງອອກ** ໝາຍເຖິງ ໂຮງງານຜະລິດ ແລະ ບໍລິສັດນໍາເຂົ້າ-ສົ່ງອອກ ທີ່ມີສິດສົ່ງອອກສິນຄ້າ;

2. **ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ** (Certified Exporter: CE) ໝາຍເຖິງ ຜູ້ສົ່ງອອກທີ່ໄດ້ຮັບອະນຸຍາດຈາກ ກົມການນໍາເຂົ້າ ແລະ ສົ່ງອອກ ໃຫ້ຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ (ASEAN Trade in Goods Agreement: ATIGA);

3. **ໃບຢັ້ງຢືນສິດ** (Certificate of Certified Exporter) ໝາຍເຖິງ ເອກະສານທາງການ ທີ່ຢັ້ງຢືນການໄດ້ຮັບສິດເປັນຜູ້ສົ່ງອອກ ທີ່ສາມາດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ;

4. **ໃບແຈ້ງລາຍລະອຽດແຫຼ່ງກໍາເນີດສິນຄ້າ** (Origin Declaration) ໝາຍເຖິງ ເອກະສານແຈ້ງຂໍ້ມູນລະອຽດ ກ່ຽວກັບ ແຫຼ່ງກໍາເນີດຂອງສິນຄ້າທີ່ຜູ້ສົ່ງອອກດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ເພື່ອແຈ້ງຕໍ່ເຈົ້າໜ້າທີ່ພາສີຂອງປະເທດນໍາເຂົ້າ ໃນການຂໍນໍາໃຊ້ສິດທິພິເສດ ຫຼຸດຜ່ອນ ຫຼື ຍົກເວັ້ນ ອັດຕາພາສີນໍາເຂົ້າ ຕາມທີ່ໄດ້ກໍານົດໄວ້ໃນລະບຽບຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ;

5. **ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ** ໝາຍເຖິງ ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ.

**ມາດຕາ 4 ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ບຸກຄົນ ແລະ ນິຕິບຸກຄົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ຢູ່ ສປປ ລາວ.

## ໝວດທີ 2
## ການດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ

**ມາດຕາ 5 ການດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ**

ການດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ແມ່ນຜູ້ສົ່ງອອກເປັນຜູ້ດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ຕາມໃບຢັ້ງຢືນສິດ ທີ່ອອກໃຫ້ໂດຍ ກົມການນໍາເຂົ້າ ແລະ ສົ່ງອອກ ຊຶ່ງຜູ້ສົ່ງອອກບໍ່ຕ້ອງສະເໜີເຖິງຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ ໃນການສົ່ງອອກສິນຄ້າແຕ່ລະຄັ້ງ.

ການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໃນການສົ່ງອອກສິນຄ້າແຕ່ລະຄັ້ງ ຕ້ອງມີໃບຢັ້ງຢືນສິດທີ່ຍັງມີຜົນບັງຄັບໃຊ້ຕາມລະບຽບກົດໝາຍ ແລະ ຕ້ອງມີໃບແຈ້ງລາຍລະອຽດແຫຼ່ງກໍາເນີດສິນຄ້າ ທີ່ປະກອບມີຂໍ້ມູນ ດັ່ງນີ້:

1. ຂໍ້ມູນ ແລະ ລະຫັດຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ;
2. ຊື່ຂອງສິນຄ້າ, ລະຫັດສິນຄ້າຕາມສາລະບານອັດຕາພາສີ (HS Code) ໃນລະດັບ 06 ຕົວເລກ, ຈໍານວນ ແລະ ປະລິມານຂອງສິນຄ້າ;
3. ເງື່ອນໄຂແຫຼ່ງກໍາເນີດສິນຄ້າ ແລະ ປະເທດທີ່ໄດ້ແຫຼ່ງກໍາເນີດຂອງສິນຄ້າ;
4. ລາຄາ FOB ໃນກໍລະນີນໍາໃຊ້ກົດການສ້າງມູນຄ່າເພີ່ມໃນພາກພື້ນ;

5. ເຄື່ອງໝາຍການຄ້າ (ຖ້າມີ);

6. ໃນກໍລະນີຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງແບບຕໍ່ເນື່ອງ (Back-to-Back) ຕ້ອງມີ ເລກທີ ແລະ ວັນທີ ຂອງເອກະສານຢັ້ງຢືນແຫຼ່ງກໍາເນີດສິນຄ້າ ສະບັບຕົ້ນ ແລະ ລະຫັດຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຂອງປະເທດຜູ້ສົ່ງອອກທໍາອິດ.

**ມາດຕາ 6 ການສະເໜີອອກໃບຢັ້ງຢືນສິດ**

ຜູ້ສົ່ງອອກ ທີ່ມີຈຸດປະສົງດໍາເນີນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ພາຍໃຕ້ສັນຍາການຄ້າດ້ານສິນຄ້າອາຊຽນ ຕ້ອງມີເງື່ອນໄຂຄົບຖ້ວນ ຕາມທີ່ກໍານົດໄວ້ໃນມາດຕາ 7 ແລະ ຕ້ອງປະກອບເອກະສານ ຕາມທີ່ກໍານົດໃນມາດຕາ 8 ຂອງຂໍ້ຕົກລົງສະບັບນີ້ ສະເໜີຕໍ່ ກົມການນໍາເຂົ້າ ແລະ ສົ່ງອອກ ເພື່ອພິຈາລະນາອອກໃບຢັ້ງຢືນສິດ.

**ມາດຕາ 7 ເງື່ອນໄຂຂອງຜູ້ສະເໜີອອກໃບຢັ້ງຢືນສິດ**

ຜູ້ສົ່ງອອກ ທີ່ມີຈຸດປະສົງສະເໜີອອກໃບຢັ້ງຢືນສິດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ສົ່ງອອກສິນຄ້າທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງ ສປປ ລາວ;
2. ຮັບຮູ້ ແລະ ເຂົ້າໃຈລະບຽບແຫຼ່ງກໍາເນີດສິນຄ້າຂອງສັນຍາການຄ້າດ້ານສິນຄ້າອາຊຽນ;
3. ມີປະສົບການໃນການສົ່ງອອກສິນຄ້າ ແລະ ນໍາໃຊ້ ແບບພິມ ດີ (Form D) ຢ່າງໜ້ອຍ ສິບ ຄັ້ງ;
4. ບໍ່ມີປະຫວັດສໍ້ໂກງໃນການຢັ້ງຢືນແຫຼ່ງກໍາເນີດສິນຄ້າ;
5. ຕ້ອງມີລະບົບການບັນທຶກ ແລະ ການຕິດຕາມຂໍ້ມູນ ກ່ຽວກັບ ການຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ລະອຽດຊັດເຈນ ຢ່າງໜ້ອຍ ສາມ ປີ;
6. ປະຕິບັດພັນທະຕ່າງໆຕໍ່ລັດ ຄົບຖ້ວນ ແລະ ເປັນປົກກະຕິ.

**ມາດຕາ 8 ເອກະສານປະກອບການສະເໜີອອກໃບຢັ້ງຢືນສິດ**

ການປະກອບເອກະສານເພື່ອສະເໜີອອກໃບຢັ້ງຢືນສິດ ມີເອກະສານ ດັ່ງນີ້:

1. ຄໍາຮ້ອງ ຕາມແບບພິມທີ່ ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດ;
2. ຂໍ້ມູນຜູ້ສົ່ງອອກ ຕາມແບບພິມທີ່ ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດ;
3. ສໍາເນົາໃບຮັບຮອງສິນຄ້າໄດ້ແຫຼ່ງກໍາເນີດ (Confirmation of Product Eligibility: CPE) ທີ່ອອກໃຫ້ໂດຍ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

**ມາດຕາ 9 ການພິຈາລະນາອອກໃບຢັ້ງຢືນສິດ**

ພາຍຫຼັງທີ່ໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ, ກົມການນໍາເຂົ້າ ແລະ ສົ່ງອອກ ຕ້ອງອອກໃບຢັ້ງຢືນສິດພາຍໃນ ສອງ ວັນລັດຖະການ. ຫຼັງຈາກອອກໃບຢັ້ງຢືນສິດ, ກົມການນໍາເຂົ້າ ແລະ ສົ່ງອອກ ຕ້ອງບັນທຶກຂໍ້ມູນຜູ້ສົ່ງອອກທີ່ໄດ້ຮັບສິດ ເຂົ້າໃນລະບົບຖານຂໍ້ມູນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຂອງອາຊຽນ.

ກໍລະນີເອກະສານບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງ, ກົມການນໍາເຂົ້າ ແລະ ສົ່ງອອກ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບ ພາຍໃນ ໜຶ່ງ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ ພ້ອມທັງໃຫ້ຄໍາແນະນໍາ ເພື່ອໃຫ້ຜູ້ສະເໜີແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ກໍລະນີບໍ່ສາມາດອອກໃບຢັ້ງຢືນສິດ, ກົມການນໍາເຂົ້າ ແລະ ສົ່ງອອກ ຕ້ອງແຈ້ງໃຫ້ຜູ້ສະເໜີຊາບ ພາຍໃນ ສອງ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານ.

**ມາດຕາ 10 ອາຍຸ ແລະ ການຕໍ່ອາຍຸໃບຢັ້ງຢືນສິດ**

ໃບຢັ້ງຢືນສິດ ມີອາຍຸນໍາໃຊ້ ສອງ ປີ ແລະ ສາມາດຕໍ່ໄດ້ ໂດຍບໍ່ຈໍາກັດຈໍານວນຄັ້ງ.

ການສະເໜີຕໍ່ອາຍຸແຕ່ລະຄັ້ງ ໃຫ້ປະກອບເອກະສານສະເໜີຕໍ່ ກົມການນໍາເຂົ້າ ແລະ ສົ່ງອອກ ກ່ອນໃບຢັ້ງຢືນສິດຈະໝົດອາຍຸ ສາມສິບ ວັນ ໂດຍປະກອບມີເອກະສານ ດັ່ງນີ້:

1. ຄໍາຮ້ອງຂໍຕໍ່ອາຍຸໃບຢັ້ງຢືນສິດ ຕາມແບບພິມທີ່ ກົມການນໍາເຂົ້າ ແລະ ສົ່ງອອກ ໄດ້ກໍານົດ;
2. ໃບຢັ້ງຢືນສິດ ສະບັບຕົ້ນ;
3. ສໍາເນົາໃບຮັບຮອງສິນຄ້າໄດ້ແຫຼ່ງກໍາເນີດ ທີ່ອອກໃຫ້ໂດຍ ຫ້ອງການເຈົ້າໜ້າທີ່ຢັ້ງຢືນແຫຼ່ງກໍາເນີດສິນຄ້າທີ່ໄດ້ຮັບສິດທິພິເສດ.

## ໝວດທີ 3
## ສິດ ແລະ ພັນທະຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ

**ມາດຕາ 11 ສິດຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ**

ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ມີສິດ ດັ່ງນີ້:

1. ຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໃນການສົ່ງອອກສິນຄ້າໄປບັນດາປະເທດສະມາຊິກອາຊຽນ ຕາມລາຍການສິນຄ້າທີ່ກໍານົດໄວ້ໃນໃບຢັ້ງຢືນສິດ;
2. ສະເໜີປັບປຸງຂໍ້ມູນຂອງໃບຢັ້ງຢືນສິດ ໃນກໍລະນີມີການປ່ຽນແປງຂໍ້ມູນ ກ່ຽວກັບ ແຫຼ່ງກໍາເນີດສິນຄ້າ ຫຼື ຕ້ອງການເພີ່ມລາຍການສິນຄ້າສົ່ງອອກ;
3. ໄດ້ຮັບສິດອື່ນຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 12 ພັນທະຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ**

ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ມີພັນທະ ດັ່ງນີ້:

1. ແຈ້ງ ກົມການນໍາເຂົ້າ ແລະ ສົ່ງອອກ ໃນກໍລະນີຕ້ອງການປ່ຽນຊື່, ສະຖານທີ່ຕັ້ງ, ຜູ້ອໍານວຍການ ຫຼືໜ່ວຍວິສາຫະກິດຂອງຜູ້ສົ່ງອອກ;
2. ເກັບຮັກສາເອກະສານທີ່ກ່ຽວຂ້ອງກັບການຜະລິດສິນຄ້າ ແລະ ການຢັ້ງຢືນແຫຼ່ງກໍາເນີດສິນຄ້າຄົບຊຸດ ຢ່າງໜ້ອຍ ສາມ ປີ ນັບແຕ່ວັນທີຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ;
3. ໃຫ້ການຮ່ວມມືໃນການອະທິບາຍ, ຊີ້ແຈງ ແລະ ໃຫ້ຂໍ້ມູນລາຍລະອຽດ ກ່ຽວກັບ ການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ຕໍ່ເຈົ້າໜ້າທີ່ກ່ຽວຂ້ອງທັງພາຍໃນ ແລະ ຕ່າງປະເທດ;
4. ສະຫຼຸບລາຍງານໃຫ້ກົມການນໍາເຂົ້າ ແລະ ສົ່ງອອກ ປະຈໍາເດືອນ ຊ້າສຸດບໍ່ໃຫ້ກາຍ ວັນທີ 10 ຂອງເດືອນຖັດໄປ;
5. ປະຕິບັດພັນທະອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ອາຊຽນ.

## ໝວດທີ 4
## ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 13  ຂໍ້ຫ້າມ**

ຫ້າມຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ມີພຶດຕິກຳ ດັ່ງນີ້:

1. ແຈ້ງຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ;

2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ;

3. ຢັ້ງຢືນແຫຼ່ງກຳເນີດຂອງສິນຄ້າ ທີ່ບໍ່ໄດ້ກຳນົດໃນໃບຢັ້ງຢືນສິດ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ ແລະ ອາຊຽນ.

**ມາດຕາ 14  ມາດຕະການຕໍ່ຜູ້ລະເມີດ**

ຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ດັ່ງນີ້:

1. ການກະທຳຜິດ ຄັ້ງທີ ໜຶ່ງ ຈະໄດ້ຖືກກ່າວເຕືອນ ແລະ ຂຽນບົດບັນທຶກຮັບຮູ້ຄວາມຜິດຂອງຕົນ, ຄັ້ງທີ ສອງ ຈະຖືກໂຈະໃບຢັ້ງຢືນສິດ ແລະ ຄັ້ງທີ ສາມ ຈະຖືກຖອນໃບຢັ້ງຢືນສິດ;

2. ຮັບຜິດຊອບໃຊ້ຈ່າຍຄ່າພາສີນຳເຂົ້າຍ້ອນຫຼັງໃຫ້ປະເທດນຳເຂົ້າ ແລະ ຄວາມຮັບຜິດຊອບອື່ນໆ ຕາມທີ່ກຳນົດໃນກົດໝາຍ ແລະ ລະບຽບການຂອງປະເທດນຳເຂົ້າ.

## ໝວດທີ 5
## ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ

**ມາດຕາ 15  ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ**

ການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ປະກອບມີ ສອງ ຂັ້ນ ດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມການນຳເຂົ້າ ແລະ ສົ່ງອອກ;

2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ.

**ມາດຕາ 16  ສິດ ແລະ ໜ້າທີ່ຂອງກົມການນຳເຂົ້າ ແລະ ສົ່ງອອກ**

ກົມການນຳເຂົ້າ ແລະ ສົ່ງອອກ ມີສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ດັ່ງນີ້:

1. ຄົ້ນຄວ້າ ສ້າງນິຕິກຳ ແລະ ລະບຽບການ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ເພື່ອນຳສະເໜີຂັ້ນເທິງພິຈາລະນາ;

2. ເຜີຍແຜ່, ແນະນຳ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການ ກ່ຽວກັບ ການຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ໃຫ້ພະນັກງານທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ຮັບຊາບຢ່າງທົ່ວເຖິງໃນຂອບເຂດທົ່ວປະເທດ;

3. ພິຈາລະນາ ອອກ, ໂຈະ, ຖອນ ໃບຢັ້ງຢືນສິດ ພ້ອມທັງ ປະຕິບັດມາດຕະການກ່າວເຕືອນ ແລະ ເຮັດບົດບັນທຶກຮັບຮູ້ຄວາມຜິດຂອງຜູ້ລະເມີດຂໍ້ຕົກລົງສະບັບນີ້;

4. ບັນທຶກ, ດັດແກ້, ຍົກເລີກ ຂໍ້ມູນຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຂອງ ສປປ ລາວ ໃນລະບົບຖານຂໍ້ມູນການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງຂອງອາຊຽນ;

5. ເປັນຈຸດປະສານງານວຽກງານຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ເພື່ອປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ທັງພາຍໃນ ແລະ ຕ່າງປະເທດ;

6. ເປັນເຈົ້າການໃນການຈັດຝຶກອົບຮົມໃຫ້ແກ່ພະນັກງານທີ່ກ່ຽວຂ້ອງ ແລະ ຜູ້ສົ່ງອອກ ກ່ຽວກັບລະບຽບການ ແລະ ວິທີການຈັດຕັ້ງປະຕິບັດການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ;

7. ລົງຕິດຕາມ ແລະ ກວດກາ ຂະບວນການຜະລິດສິນຄ້າຢູ່ໂຮງງານຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໃນກໍລະນີມີການກວດສອບແຫຼ່ງກໍາເນີດສິນຄ້າຄືນຂອງເຈົ້າໜ້າທີ່ພາສີປະເທດນໍາເຂົ້າ;

8. ສະຫຼຸບ ແລະ ລາຍງານ ກ່ຽວກັບການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງອາຊຽນ ໃຫ້ຄະນະນໍາກະຊວງ ແລະ ກອງເລຂາອາຊຽນ ເປັນແຕ່ລະໄລຍະ;

9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ກໍານົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງ ສປປ ລາວ.

**ມາດຕາ 17 ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ໃນການຈັດຕັ້ງປະຕິບັດວຽກງານການຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ດັ່ງນີ້:

1. ເຜີຍແຜ່, ແນະນໍາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ໃຫ້ພະນັກງານທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ ຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ;

2. ສົມທົບກັບ ກົມການນໍາເຂົ້າ ແລະ ສົ່ງອອກ ໃນການລົງຕິດຕາມ ແລະ ກວດກາສະຖານທີ່ຂອງໂຮງງານຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ;

3. ຕິດຕາມການຜະລິດ ແລະ ການສົ່ງອອກ ຂອງຜູ້ສົ່ງອອກທີ່ໄດ້ຮັບສິດຢັ້ງຢືນແຫຼ່ງກໍາເນີດສິນຄ້າດ້ວຍຕົນເອງ ໃນຂອບເຂດແຂວງ, ນະຄອນຫຼວງ ຂອງຕົນ ເພື່ອສະຫຼຸບລາຍງານໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ;

4. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມການມອບໝາຍຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 18 ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ແລະ ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບປະສິດທິຜົນສູງ.

**ມາດຕາ 19 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ພາຍຫຼັງລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການຈັດຕັ້ງປະຕິບັດໂຄງການທົດລອງຢັ້ງຢືນແຫຼ່ງກຳເນີດສິນຄ້າດ້ວຍຕົນເອງ ທີ II ຂອງອາຊຽນ ສະບັບເລກທີ 0442/ອຄ.ກຂອ, ລົງວັນທີ 06 ມີນາ 2013.

ລັດຖະມົນຕີ

ນ. ເຂັມມະນີ ພົນເສນາ